ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອົງການປະກັນສັງຄົມແຫ່ງຊາດ

ເລກທີ 557 /ອປຊ

ນະຄອນຫຼວງວຽງຈັນ, ວັນທີ 09 JUL 2020

# ແຈ້ງການ

ເຖິງ: ບັນດາທ່ານ ທີ່ເປັນສະມາຊິກ ອົງການປະກັນສັງຄົມແຫ່ງຊາດ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

ເລື່ອງ: ການ ປ່ຽນໂຮງໝໍ ເພື່ອໃຊ້ບໍລິການປິ່ນປົວສຸຂະພາບ.

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ (ສະບັບປັບປຸງ) ສະບັບເລກທີ 54/ສພ, ລົງວັນທີ 27 ມິຖຸນາ 2018.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປະກັນສັງຄົມແຫ່ງຊາດ ສະບັບເລກທີ 1439/ຣລສ, ລົງວັນທີ 22/05/2020.

ອົງການປະກັນສັງຄົມແຫ່ງຊາດ ຂໍແຈ້ງມາຍັງບັນດາທ່ານທີ່ເປັນສະມາຊິກຂອງປະກັນສັງຄົມ ຊາບວ່າ ອົງການປະກັນສັງຄົມແຫ່ງຊາດ ມີການປັບປຸງລະບົບການແຈ້ງປ່ຽນໂຮງໝໍຂອງຜູ້ປະກັນຕົນ ແລະ ສະມາຊິກຄອບຄົວ ເປັນຕົ້ນ ພະນັກງານ-ລັດຖະກອນ, ພະນັກງານບໍານານ, ພະນັກງານເສຍອົງຄະ, ຜູ້ຮັບອຸດໜູນດູແລ, ຜູ້ອອກແຮງງານໃນວິສາຫະກິດຕ່າງໆ, ຜູ້ປະກັນຕົນແບບສະໝັກໃຈ, ຄູ່ສົມລົດ ແລະ ລູກ ສາມາດແຈ້ງປ່ຽນໂຮງໝໍໄດ້ປີລະຄັ້ງ ໂດຍຈະບໍ່ໄດ້ກໍານົດວ່າຢູ່ໃນໄລຍະໃດ, ຖ້າຜູ້ໃດທີ່ໄດ້ແຈ້ງປ່ຽນໂຮງໝໍໃນປີ 2020 ແລ້ວ ຫາກມີຈຸດປະສົງຈະປ່ຽນໂຮງໝໍໃໝ່ອີກແມ່ນຕ້ອງໄດ້ລໍຖ້າປີຕໍ່ໄປ, ສໍາລັບຜູ້ທີ່ບໍ່ທັນໄດ້ແຈ້ງປ່ຽນໂຮງໝໍໃນປີນີ້ກໍຍັງສາມາດແຈ້ງປ່ຽນໄລຍະໃດກໍໄດ້, ສ່ວນຜູ້ທີ່ຍົກຍ້າຍບ່ອນປະຈໍາການ ຫລື ປ່ຽນບ່ອນຢູ່ອາໄສໄປແຂວງອື່ນ ແມ່ນສາມາດແຈ້ງປ່ຽນໂຮງໝໍໃໝ່ໄດ້ໂດຍບໍ່ຕ້ອງລໍຖ້າໃຫ້ຄົບໜຶ່ງປີ.

ດັ່ງນັ້ນ,ຈຶ່ງຂໍແຈ້ງການມາຍັງບັນດາທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການປະຕິບັດດ້ວຍ.

ຫົວໜ້າອົງການ

ແກ້ວ ຈັນທະວົໄຊ

ໝາຍເຫດ:

ກໍລະນີບໍ່ມີການແຈ້ງປ່ຽນ ຖືວ່າຍັງໃຊ້ໂຮງໝໍທີ່ເລືອກຜ່ານມາ.

ອົງການປະກັນສັງຄົມແຫ່ງຊາດ (ອປຊ), ບ້ານທົ່ງສ້າງນາງ, ຖະໜົນ ທົ່ງສ້າງນາງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ: ໂທ: ສາຍດ່ວນ 1508; (856 21 241 280-81); ແຟັກ (856 21 241 279); ຕູ້ປນ: 7798; Website: www.nssf.gov.la; Email: nssflaos@nssf.gov.la